ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ — ເລກທີ 0824 /ຫກປຊ

ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ — ນະຄອນຫລວງວຽງຈັນ,ວັນທີ 28 JUN 2016

# ແຈ້ງການ

ເຖິງ : ບັນດາຫົວໜ່ວຍແຮງງານ, ຜູ້ອອກແຮງງານ ແລະ ຜູ້ສະໝັກໃຈໃນຂອບເຂດທົ່ວປະເທດ.

ເລື່ອງ : ການປະຕິບັດການປັບປຸງເພດານເງິນເດືອນປະກັນຕົນສູງສຸດ ແລະ ຕໍ່າສຸດ ເພື່ອຄິດໄລ່ເງິນສົມທົບເຂົ້າກອງທຶນປະກັນສັງຄົມ

- ອີງຕາມກົດໝາຍວ່າດ້ວຍການປະກັນສັງຄົມ ເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການກຳນົດເພດານເງິນເດືອນປະກັນຕົນຕໍ່າສຸດ ແລະ ສູງສຸດເພື່ອຄິດໄລ່ເງິນສົມທົບເຂົ້າກອງທຶນປະກັນສັງຄົມສະບັບເລກທີ 1740/ຮສສ, ລົງວັນທີ 25 ເມສາ 2016;

ເພື່ອປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ຜູ້ອຳນວຍການຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ (ຫກປຊ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານເຈົ້າຂອງວິສາຫະກິດຕ່າງໆ, ຜູ້ປະກັນຕົນ ແລະ ຜູ້ທີ່ກ່ຽວຂ້ອງຊາບວ່າ: **ນັບແຕ່ວັນທີ 01 ມັງກອນ 2017** ທາງຫ້ອງການກອງທຶນຈະໄດ້ປະຕິບັດການປັບປຸງເພດານເງິນເດືອນປະກັນຕົນສູງສຸດ ຊຶ່ງໃນເມື່ອກ່ອນແມ່ນ **2.000.000 ກີບ** ຂຶ້ນເປັນ **4.500.000 ກີບ**; ສຳລັບຜູ້ທີ່ມີເງິນເດືອນສູງກວ່າເພດານດັ່ງກ່າວນີ້ແມ່ນໃຫ້ກຳນົດເອົາເທົ່າກັບເພດານສູງສຸດມາເປັນບ່ອນອີງເພື່ອຄິດໄລ່ເງິນສົມທົບ, ສ່ວນຜູ້ທີ່ມີເງິນເດືອນໃນລະຫວ່າງຄ່າແຮງງານຂັ້ນຕໍ່າສຸດທີ່ລັດຖະບານກຳນົດຫາເພດານສູງສຸດນີ້ ແມ່ນໃຫ້ເອົາເງິນເດືອນຕົວຈິງທີ່ໄດ້ຮັບເປັນບ່ອນອີງໃນການຄິດໄລ່ເງິນສົມທົບເຂົ້າກອງທຶນ. ກໍລະນີມີຄວາມຈຳເປັນທີ່ລາຍຮັບປະຈຳເດືອນຂອງຜູ້ອອກແຮງງານຫາກຫລຸດລະດັບຄ່າແຮງງານຂັ້ນຕໍ່າສຸດ ເນື່ອງຈາກການເຮັດວຽກບໍ່ເຕັມເວລາ, ເຈັບປ່ວຍ, ເຮັດຕາມຜະລິດຕະພັນ ຫລື ອື່ນໆທີ່ສົມເຫດສົມຜົນ ແມ່ນສາມາດເອົາມາເປັນບ່ອນອີງຈ່າຍໄດ້ແຕ່ບໍ່ໃຫ້ຫລຸດ 50% ຂອງຄ່າແຮງງານຂັ້ນຕໍ່າສຸດທີ່ລັດຖະບານປະກາດໃຊ້ ຊຶ່ງໝາຍຄວາມວ່າໄລຍະນີ້ແມ່ນບໍ່ໃຫ້ຫລຸດ 450.000 ກີບ. ລະບົບປະກັນສັງຄົມພາຍໃຕ້ກົດໝາຍສະບັບເລກທີ 34/ສພຊ ໃນປະຈຸບັນແມ່ນລະບົບທີ່ໃຫ້ການປົກປ້ອງແກ່ສະມາຊິກຂອງກອງທຶນຂັ້ນພື້ນຖານ ໂດຍມີການສະເລ່ຍຄວາມສ່ຽງລະຫວ່າງຜູ້ມີລາຍຮັບສູງ ແລະ ຜູ້ມີລາຍຮັບຕໍ່າ. ການກຳນົດເພດານສູງສຸດແມ່ນເຮັດໃຫ້ຜູ້ອອກແຮງງານທີ່ມີເງິນເດືອນສູງໄດ້ສົມທົບເຂົ້າກອງທຶນໃນລະດັບສົມເຫດສົມຜົນ ແລະ ໄດ້ຮັບການອຸດໜູນທີ່ແທດເໝາະກັບສະພາບເສດຖະກິດປະຈຸບັນ. ການກຳນົດເພດານຕໍ່າສຸດ ແມ່ນເພື່ອຮັບປະກັນໃຫ້ຜູ້ອອກແຮງງານໄດ້ຮັບເງິນອຸດໜູນໃນລະດັບທີ່ແນ່ນອນ ຊຶ່ງສາມາດດຳລົງຊີວິດໃນສັງຄົມໄດ້.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດປະຕິບັດດ້ວຍ.

ຜູ້ອຳນວຍການ ຫກປຊ

ປະເດີມພອນ ສິນທະມີ